ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
****

ເລກທີ 042/ສພທ.ທຄຕລ
ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ວັນທີ 31/07/2017

ມະຕິ
ກອງປະຊຸມສະພາບໍລິຫານ ທຄຕລ ສະໄໝສາມັນ ຄັ້ງທີ 2 ປະຈຳປີ 2017, ວັນທີ 31/07/2017

ກອງປະຊຸມສະພາບໍລິຫານ ຂອງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ສະໄໝສາມັນ ຄັ້ງທີ 2 ປະຈຳປີ 2017 ໄດ້ເປີດຂຶ້ນໃນເວລາ 13:30 ໂມງ ຂອງວັນທີ 31/07/2017 ທີ່ສຳນັກງານໃຫຍ່ ທຄຕລ ໂດຍການເປັນປະທານຂອງ ທ່ານ ດຣ. ບຸນເຫຼືອ ສົມໄຊວໍຣະວົງ, ປະທານສະພາບໍລິຫານ ທຄຕລ, ມີສະມາຊິກສະພາບໍລິຫານ ແລະ ຜູ້ສັງເກດການເຂົ້າຮ່ວມຕາມລາຍຊື່ຊ້ອນທ້າຍ.

ກອງປະຊຸມໄດ້ປຶກສາຫາລືບັນຫາຕ່າງໆພ້ອມທັງໄດ້ມີມະຕິຕົກລົງ ດັ່ງນີ້:

1. ສະພາບໍລິຫານ ຮັບຊາບຕໍ່ຜົນການດຳເນີນງານ ແລະ ຜົນການດຳເນີນທຸລະກິດ (ຕາມບັນຊີ ທຄຕລ) 6 ເດືອນຕົ້ນປີ 2017, ພາຍຫຼັງສຳເລັດບົດລາຍງານຂອງຜູ້ກວດສອບອິດສະລະໂດຍບໍລິສັດເອີນແອນຢັ້ງລາວຈຳກັດ ມອບໃຫ້ ທຄຕລ ລາຍງານຜ່ານຈົດໝາຍວຽນ ໃຫ້ສະພາບໍລິຫານພິຈາລະນາຮັບຮອງ ແລະ ເປີດເຜີຍຂໍ້ມູນບົດລາຍງານຕໍ່ມວນຊົນ.
2. ຮັບຮອງເອົາຮ່າງການປັບປຸງກົດລະບຽບ ທຄຕລ ແລະ ໃຫ້ນຳສະເໜີກອງປະຊຸມຜູ້ຖືຮຸ້ນ ທຄຕລ ເພື່ອພິຈາລະນາຮັບຮອງ.
3. ຮັບຮອງເອົາຮ່າງກົດລະບຽບວ່າດ້ວຍພາລະບົດບາດ, ສິດ ແລະ ໜ້າທີ່ຂອງ 5 ຄະນະກຳມະການທີ່ຂຶ້ນກັບສະພາບໍລິຫານ ທຄຕລ.
4. ຮັບຮອງເອົາການດັດແກ້ກົດລະບຽບວ່າດ້ວຍການຈັດຊື້, ກໍ່ສ້າງ, ແລະ ສ້ອມແປງຂອງ ທຄຕລ.
5. ເຫັນດີເປີດກອງປະຊຸມວິສາມັນຜູ້ຖືຮຸ້ນ ທຄຕລ ເພື່ອພິຈາລະນາຮັບຮອງບັນຫາສຳຄັນຕ່າງໆຂອງ ທຄຕລ, ມອບໃຫ້ຄະນະອຳນວຍການ ທຄຕລ ຄົ້ນຄວ້ານຳສະເໜີຕໍ່ສະພາບໍລິຫານ ກ່ຽວກັບ ກຳນົດການເປີດ ແລະ ວາລະຂອງກອງປະຊຸມ.

ກອງປະຊຸມໄດ້ປິດລົງໃນເວລາ 16:15 ໂມງ ຂອງວັນດຽວກັນ.

ປະທານສະພາບໍລິຫານ ທຄຕລ

ປອ. ບຸນເຫຼືອ ສົມໄຊວໍຣະວົງ